ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ສະເຫຼີມສະຫຼອງວັນກຳມະກອນສາກົນ ຄົບຮອບ 140 ປີ




ໃນວັນທີ 1 ພຶດສະພາ 2026, ທີ່ສະໜາມປະຕູໄຊ (ເດີນ ອານຸສາວະລີ) ນະຄອນຫຼວງວຽງຈັນ. ທະນາຄານແຫ່ງ ສປປ ລາວ (ທຫລ) ນຳພາໂດຍ ສະຫາຍ ນ. ບຸນຄຳ ວໍລະຈິດ ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ ໄດ້ເຂົ້າຮ່ວມຂະບວນການຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນກຳມະກອນສາກົນ ຄົບຮອບ 140 ປີ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສຈ. ປອ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ, ພ້ອມດ້ວຍ ຄະນະປະທານສູນກາງສະຫະພັນກຳມະບານລາວ ແລະ ບັນດາການນຳຂັ້ນສູງພັກ-ລັດ. ຊຶ່ງພິທີດັ່ງກ່າວ ໄດ້ມີສະມາຊິກກຳມະບານຈາກ ສະຫະພັນກຳມະບານ ທຫລ ເຂົ້າຮ່ວມຫຼາຍກວ່າ 200 ສະຫາຍ.

ພິທີດັ່ງກ່າວ ປະກອບດ້ວຍມວນຊົນເຂົ້າຮ່ວມເປັນຈຳນວນຫຼວງຫຼາຍ ແລະ ເຕັມໄປດ້ວຍບັນຍາກາດຄຶກຄື້ນມ່ວນຊື່ນ ໃນການຮັບຊົມສິລະປະວັນນະຄະດີ ແລະ ກິດຈະກຳຕ່າງໆ ທີ່ສູນກາງສະຫະພັນກຳມະບານລາວໄດ້ຈັດຂຶ້ນ.

**ຂ່າວ-ພາບ: ຫ້ອງການ ທຫລ**

## ຢູ່ເມືອງລາວໃຊ້ເງິນກີບລາວ